ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ
LDB Securities Sole Co., Ltd

ນະຄອນຫຼວງວຽງຈັນ, ວັນທີ………........

**ສັນຍານຳໃຊ້ການບໍລິການ ຊື້-ຂາຍຮຸ້ນທາງອິນເຕີເນັດ**

ລະຫວ່າງ ຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການ

**ຝ່າຍ ກ ເຊິ່ງຕໍ່ໄປນີ້ເອີ້ນວ່າ ຜູ້ໃຊ້ບໍລິການ (ລູກຄ້າ):**

ຊື່ ແລະ ນາມສະກຸນ/ສະຖາບັນ: ………………………..........……………….., ວັນ/ເດືອນ/ປີເກີດ ……………..........

ທີ່ຢູ່/ທີ່ຕັ້ງສຳນັກງານ……………………………………………........…........., ສັນຊາດ…………………..……

ບັດປະຈຳຕົວ/ໜັງສືເດີນທາງ/ປຶ້ມສຳມະໂນຄົວ/ທະບຽນວິສະຫະກິດ ເລກທີ………...................., ລົງວັນທີ .........................

ໂທລະສັບຕັ້ງໂຕະ……………….………… ໂທລະສັບມືຖື……………..........….......... ແຟັກ……………………..........

**ແລະ**

**ຝ່າຍ ຂ ເຊິ່ງຕໍ່ໄປນີ້ເອີ້ນວ່າ ຜູ້ໃຫ້ບໍລິການ (ບໍລິສັດຫຼັກຊັບ):**

ຊື່ບໍລິສັດ: **ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ** ທີ່ມີສຳນັກງານຕັ້ງຢູ່ ທະນາຄານພັດທະນາລາວ ສາຂາຈອມເພັດ, ບ້ານຈອມເພັດ , ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ .ໂທລະສັບຕັ້ງໂຕະ: 021 224001-3, ອີເມວ: ldbs.brokerage@gmail.com

ໃນນີ້ຜູ້ໃຊ້ບໍລິການ ໄດ້ເປີດບັນຊີຊື້-ຂາຍຫຼັກຊັບ ກັບ ຜູ້ໃຫ້ບໍລິການ ເພື່ອແຕ່ງຕັ້ງນາຍໜ້າຊື້-ຂາຍຫຼັກຊັບ ເພື່ອການຊື້-ຂາຍຫຼັກຊັບ. ເລກບັນຊີຫຼັກຊັບ: ………………………………ທັງສອງຝ່າຍຕົກລົງເຊັນສັນຍາຮ່ວມກັນເຊິ່ງມີເນື້ອໃນດັ່ງລຸ່ມນີ້:

**ມາດຕາ 1. ຈຸດປະສົງ**

ສັນຍາສະບັບນີ້ມີຈຸດປະສົງເພື່ອກຳນົດສິດ, ໜ້າທີ່, ພັນທະ, ຄວາມຮັບຜິດຊອບ ແລະ ການໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດລະຫວ່າງຜູ້ໃຊ້ບໍລິການ ກັບ ຜູ້ໃຫ້ບໍລິການ.

**ມາດຕາ 2. ຂອບເຂດການນຳໃຊ້**

ສັນຍາສະບັບນີ້ນຳໃຊ້ສຳລັບ ຜູ້ໃຊ້ບໍລິການ ແລະ ຜູ້ໃຫ້ບໍລິການທີ່ໄດ້ເຊັນສັນຍາສະບັບນີ້ຮ່ວມກັນ.

**ມາດຕາ 3. ເງື່ອນໄຂຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການຕ້ອງມີເງື່ອນໄຂດັ່ງນີ້:

1. ເປັນຜູ້ທີ່ມີຄວາມສາມາດທາງດ້ານການປະພຶດ;
2. ມີການຕິດຕັ້ງໂປຼແກຼມຊື້-ຂາຍຮຸ້ນທາງອິນເຕີເນັດ;
3. ຄອມພິວເຕີຂອງຜູ້ໃຊ້ບໍລິການທີ່ນຳໃຊ້ເພື່ອສົ່ງຄຳສັ່ງຊື້-ຂາຍຮຸ້ນຕ້ອງມີໂປຼແກຼມຕ້ານໄວລັສ;
4. ມີການເຊື່ອມຕໍ່ສັນຍານເຄືອຄ່າຍອິນເຕີເນັດທີ່ຮັບປະກັນການຊື້-ຂາຍຮຸ້ນທາງອິນເຕີເນັດ;
5. ມີສັນຍາໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດກັບ ຜູ້ໃຫ້ບໍລິການ;
6. ຕ້ອງເປັນລູກຄ້າຂອງຜູ້ໃຫ້ບໍລິການ;
7. ສະໜອງຂໍ້ມູນຖືກຕ້ອງ ແລະ ຄົບຖ້ວນຕາມແບບຟອມສະໝັກຂອງຜູ້ໃຫ້ບໍລິການ;
8. ເງື່ອນໄຂອື່ນໆຕາມການກຳນົດຂອງສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ.

**ມາດຕາ 4. ການອອກລະຫັດການຊື້-ຂາຍຮຸ້ນທາງອິນເຕີເນັດ, ການປ່ຽນແປງ ແລະ ຮັກສາລະຫັດຜ່ານ**

1. ຜູ້ໃຊ້ບໍລິການຈະໄດ້ຮັບລະຫັດຊື້ຂາຍຮຸ້ນທາງອິນເຕີເນັດຈາກ ຜູ້ໃຫ້ບໍລິການຊຶ່ງມີ 8 ຕົວອັກສອນ ຫຼື ຕົວເລກ ພ້ອມທັງລະຫັດຜ່ານ;
2. ຫຼັງຈາກຜູ້ໃຊ້ບໍລິການໄດ້ຮັບລະຫັດຜ່ານຄັ້ງທໍາອິດຈາກຜູ້ໃຫ້ບໍລິການແລ້ວ ຜູ້ໃຊ້ບໍລິການຕ້ອງປ່ຽນລະຫັດຜ່ານດັ່ງກ່າວດ້ວຍຕົນເອງ;
3. ຜູ້ໃຊ້ບໍລິການຕ້ອງຮັກສາລະຫັດການຊື້ຂາຍຮຸ້ນທາງອິນເຕີເນັດ ແລະ ລະຫັດຜ່ານຂອງຕົນໃຫ້ເປັນຄວາມລັບ.

**ມາດຕາ 5. ສິດ ແລະ ໜ້າທີ່ຂອງຄູ່ສັນຍາລະຫວ່າງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ**

**5.1 ສິດ ແລະ ໜ້າທີ່ຂອງຜູ້ໃຫ້ບໍລິການ**

**5.1.1 ສິດຂອງຜູ້ໃຫ້ບໍລິການ**

1. ໃຫ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດຕາມການອະນຸຍາດຂອງຫົວໜ້າ ສໍານັກງານ ຄຄຊ;
2. ປ່ຽນແປງເນື້ອໃນສັນຍາຊື້-ຂາຍຮຸ້ນຜ່ານອິນເຕີເນັດຕາມການຕົກລົງເຫັນດີຂອງຫົວໜ້າສໍານັກງານ ຄຄຊ;
3. ຮຽກເອົາຂໍ້ມູນຕ່າງໆທີ່ຕິດພັນກັບການເຄື່ອນໄຫວຊື້-ຂາຍຮຸ້ນຜ່ານອິນເຕີເນັດຈາກພາກ ສ່ວນທີ່ກ່ຽວຂ້ອງເມື່ອມີຄວາມຈໍາເປັນ;
4. ໃຫ້ບໍລິສັດໃດໜຶ່ງທີ່ຊ່ຽວຊານທາງດ້ານໄອທີເປັນຜູ້ພັດທະນາລະບົບທີ່ກ່ຽວຂ້ອງກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
5. ສິດອື່ນໆຕາມການກໍານົດຂອງ ສໍານັກງານ ຄຄຊ.

**5.1.2 ໜ້າທີ່ຂອງຜູ້ໃຫ້ບໍລິການ**

1. ສ້າງ, ປັບປຸງ ແລະ ພັດທະນາ ລະບົບຊື້-ຂາຍຮຸ້ນຜ່ານອິນເຕີເນັດຕາມມາດຕະຖານທີ່ ກໍານົດໄວ້ໃນລະບຽບວ່າດ້ວຍການຄຸ້ມຄອງການຊື້-ຂາຍຮຸ້ນທາງອິນເຕີເນັດ;
2. ຄຸ້ມຄອງ ແລະ ບໍາລຸງຮັກສາ ລະບົບຊື້-ຂາຍຮຸ້ນຜ່ານອິນເຕີເນັດໃຫ້ສາມາດໃຊ້ງານໄດ້ ຢ່າງຕໍ່ເນື່ອງ ແລະ ມີປະສິດທິພາບ;
3. ໃຫ້ບໍລິສັດໃດໜຶ່ງທີ່ຊ່ຽວຊານທາງດ້ານໄອທີເປັນຜູ້ພັດທະນາລະບົບທີ່ກ່ຽວຂ້ອງກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
4. ໃຫ້ຄວາມຮູ້ກ່ຽວກັບການຊື້-ຂາຍຮຸ້ນທາງອິນເຕີເນັດໃຫ້ແກ່ຜູ້ໃຊ້ບໍລິການ;
5. ສ້າງລະບຽບຄຸ້ມຄອງຜູ້ໃຊ້ບໍລິການທີ່ເປັນລູກຄ້າຂອງຕົນ;
6. ສະໜອງໂປຼແກຼມຊື້-ຂາຍຮຸ້ນຜ່ານອິນເຕີເນັດໃຫ້ແກ່ຜູ້ໃຊ້ບໍລິການ;
7. ສ້າງສູນບໍລິການລູກຄ້າເພື່ອສະໜອງຂໍ້ມູນກ່ຽວກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
8. ແຕ່ງຕັ້ງພະນັກງານຕິດຕາມຜູ້ໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
9. ຮຽກເອົາຂໍ້ມູນຕ່າງໆກ່ຽວກັບຜູ້ໃຊ້ບໍລິການ ແລະ ສະໜອງໃຫ້ແກ່ສໍານັກງານ ຄຄຊ ເມື່ອມີຄວາມຈໍາເປັນ;
10. ກວດກາຂໍ້ມູນຂອງຜູ້ໃຊ້ບໍລິການໃຫ້ສາມາດລະບຸໄດ້ເຖິງຕົວຕົນທີ່ແທ້ຈິງຂອງຜູ້ໃຊ້ບໍລິການໃນເວລາຂໍເປີດໃຊ້ບໍລິການ;
11. ປະຕິບັດໜ້າທີ່ອື່ນໆ ຕາມການກໍານົດຂອງ ສໍານັກງານ ຄຄຊ.

**5.2 ສິດ ແລະ ໜ້າທີ່ຂອງຜູ້ໃຊ້ບໍລິການ**

**5.2.1 ສິດຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການມີສິດ ດັ່ງນີ້:

1. ໄດ້ຮັບຂໍ້ມູນກ່ຽວກັບວິທີການນໍາໃຊ້ລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດ;
2. ໄດ້ຮັບໂປຼແກຼມຊື້-ຂາຍຮຸ້ນຜ່ານອິນເຕີເນັດ;
3. ສົ່ງຄໍາສັ່ງຊື້-ຂາຍຮຸ້ນຜ່ານອິນເຕີເນັດຕາມເງື່ອນໄຂທີ່ກໍານົດໃນລະບຽບສະບັບນີ້;
4. ປ່ຽນລະຫັດຜ່ານ;

5. ສະເໜີ ຫຼື ຮ້ອງຮຽນຕໍ່ສຳນັກງານ ຄຄຊ, ຜູ້ໃຫ້ບໍລິການ, ຕະຫຼາດຫຼັກຊັບ ກ່ຽວກັບ ການເຄື່ອນໄຫວທີ່ຕິດພັນ ກັບການຊື້-ຂາຍຮຸ້ນທາງອິນເຕີເນັດ;
6. ຮຽກຄ່າເສຍຫາຍທີ່ເກີດຂຶ້ນໃນກໍລະນີ ລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດຫຼົ້ມຈາກຜູ້ໃຫ້ບໍລິການລາຍລະອຽດໃຫ້ລະບຸແຈ້ງໃນສັນຍາລະຫວ່າງຜູ້ໃຫ້ບໍລິການກັບໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ;
7. ສິດອື່ນໆຕາມການກຳນົດຂອງ ສຳນັກງານ ຄະນະກຳມະການຄຸ້ມຄອງຫຼັກຊັບ.

### 5.2.2 ໜ້າທີ່ຂອງຜູ້ໃຊ້ບໍລິການ

1. ປະຕິບັດຕາມລະບຽບຫຼັກການທີ່ກ່ຽວຂ້ອງ;
2. ຮັບຜິດຊອບຕໍ່ຄຳສັ່ງຊື້-ຂາຍຮຸ້ນ ທີ່ຕົນໄດ້ສົ່ງຄຳສັ່ງຊື້-ຂາຍຮຸ້ນເຂົ້າສູ່ລະບົບຊື້-ຂາຍຮຸ້ນ ທາງອິນເຕີເນັດ;
3. ສະໜອງທຸກຂໍ້ມູນ ທີ່ກ່ຽວຂ້ອງກັບການເຄື່ອນໄຫວຊື້-ຂາຍຮຸ້ນຜ່ານອິນເຕີເນັດ ຕາມ ການສະເໜີຂອງຫົວໜ້າສຳນັກງານ ຄຄຊ, ຕະຫຼາດຫຼັກຊັບ, ຜູ້ໃຫ້ບໍລິການ ແລະ ຜູ້ໃຫ້ບໍລິການເຄືອຄ່າຍອິນເຕີເນັດ;
4. ລາຍງານກ່ຽວກັບການເຄື່ອນໄຫວຊື້-ຂາຍຮຸ້ນທີ່ບໍ່ເປັນທຳ ໃນລະບົບຊື້-ຂາຍຮຸ້ນທາງອິນ ເຕີເນັດໃຫ້ແກ່ສຳນັກງານ ຄລຕ;
5. ແຈ້ງການການຍົກເລີກ ກ່ຽວກັບການໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດທີ່ຕົນໄດ້ເປີດນຳໃຊ້ບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດກັບຜູ້ໃຫ້ບໍລິການ;
6. ປະຕິບັດໜ້າທີ່ອື່ນໆ ຕາມການກຳນົດຂອງ ສຳນັກງານ ຄຄຊ.

### ມາດຕາ 6. ຄວາມຮັບຜິດຊອບ ແລະ ການທົດແທນຄ່າເສຍຫາຍຂອງຜູ້ໃຫ້ບໍລິການ

1. ຜູ້ໃຫ້ບໍລິການຕ້ອງຮັບຜິດຊອບໃນກໍລະນີເກີດຄວາມເສຍຫາຍກັບຜູ້ໃຊ້ບໍລິການເນື່ອງຈາກສະໜອງຂໍ້ມູນທີ່ບໍ່ມີມູນຄວາມຈິງ ຫຼື ຂໍ້ມູນຜິດພາດໃຫ້ແກ່ຜູ້ໃຊ້ບໍລິການ ດ້ວຍການສະໜອງຂໍ້ມູນໃນຮູບແບບໃດກໍ່ຕາມ;
2. ແຈ້ງຄວາມເສຍຫາຍທີ່ເກີດຂຶ້ນທີ່ກ່ຽວຂ້ອງກັບ ລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ໃຫ້ຜູ້ໃຊ້ບໍລິການຊາບທັນທີ;
3. ຮັບຜິດຊອບເນື້ອໃນທັງໝົດທີ່ໄດ້ລະບຸໄວ້ໃນສັນຍາສະບັບນີ້ລະຫວ່າງ ຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ;
4. ຮັບຜິດຊອບຜົນເສຍຫາຍທີ່ເກີດຂຶ້ນຈາກການປະຕິບັດໜ້າທີ່ບໍ່ຖືກຕ້ອງ ຫຼື ປະຕິບັດໜ້າທີ່ດ້ວຍຄວາມປະໝາດ ແລະ ເລີນເລີ້;

ຜູ້ໃຫ້ບໍລິການຕ້ອງທົດແທນຄ່າເສຍຫາຍທີ່ເກີດຂຶ້ນຕົວຈິງຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ແກ່ຜູ້ໃຊ້ບໍລິການຕາມການກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

### ມາດຕາ 7. ຄວາມຮັບຜິດຊອບ ແລະ ການທົດແທນຄ່າເສຍຫາຍຂອງຜູ້ໃຊ້ບໍລິການ

1. ຮັບຜິດຊອບຄວາມເສຍຫາຍໃນກໍລະນີທີ່ສະໜອງຂໍ້ມູນທີ່ບໍ່ມີມູນຄວາມຈິງ ຫຼື ຂໍ້ມູນຜິດພາດໃຫ້ແກ່ຜູ້ໃຫ້ບໍລິການ ດ້ວຍການສະໜອງຂໍ້ມູນໃນຮູບແບບໃດກໍ່ຕາມ;
2. ຮັບຜິດຊອບຕໍ່ທຸກຄຳສັ່ງຊື້-ຂາຍຂອງຕົນເຂົ້າໄປໃນລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ;
3. ຮັບຜິດຊອບຕໍ່ການເກັບຮັກສາລະຫັດຊື້-ຂາຍຮຸ້ນທາງອິນເຕີເນັດ ແລະ ລະຫັດຜ່ານ ຫຼື ເປີດເຜີຍລະຫັດດັ່ງກ່າວໃຫ້ແກ່ຜູ້ອື່ນຊາບ ຫຼື ອະນຸຍາດໃຫ້ຜູ້ອື່ນນຳໃຊ້ລະຫັດຜ່ານຂອງຕົນເພື່ອສົ່ງຄຳສັ່ງຊື້-ຂາຍ;
4. ຮັບຜິດຊອບຜົນເສຍຫາຍທີ່ເກີດຂຶ້ນຈາກຄອມພິວເຕີຂອງຕົນ.

ຜູ້ໃຊ້ບໍລິການຕ້ອງທົດແທນຄ່າເສຍຫາຍທີ່ເກີດຂຶ້ນຕົວຈິງໃນ ຂອບເຂດຄວາມຮັບຜິດຊອບຂອງຕົນໃຫ້ແກ່ຜູ້ໃຫ້ບໍລິການຕາມການກຳນົດໄວ້ໃນລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 8. ຂໍ້ຍົກເວັ້ນຂອງຜູ້ໃຫ້ບໍລິການ**

ຜູ້ໃຫ້ບໍລິການຈະບໍ່ຮັບຜິດຊອບຕໍ່ຜົນເສຍຫາຍໃນກໍລະນີດັ່ງຕໍ່ໄປນີ້:

1. ຕະຫຼາດຫຼັກຊັບລາວ ຫຼື ສະຖາບັນການເງິນອື່ນໆທີ່ກ່ຽວຂ້ອງບໍ່ປະຕິບັດຕາມໜ້າທີ່ຂອງຕົນ;
2. ລະບົບການຊື້-ຂາຍຮຸ້ນທາງອິນເຕີເນັດ ຫຼົ້ມ, ຊັກຊ້າ, ເກີດຂໍ້ຜິດພາດ ຊຶ່ງເກີດຈາກບັນຫາພາຍໃນຂອງລະບົບຊື້-ຂາຍຮຸ້ນທາງອິນເຕີເນັດ ແລະ ຄອມພິວເຕີຂອງຜູ້ໃຊ້ບໍລິການ;
3. ຈົດໝາຍຕິດຕໍ່ (ອີເມວ) ບໍ່ສາມາດສົ່ງເຖິງຜູ້ໃຫ້ບໍລິການຕາມທີ່ຢູ່ທີ່ໄດ້ລົງທະບຽນໄວ້ໃນໃບຄຳຮ້ອງການຊື້-ຂາຍຮຸ້ນທາງອິນເຕີເນັດ;
4. ລະບົບເກີດຂໍ້ຜິດພາດ ຫຼື ຢຸດໃຫ້ບໍລິການ ທີ່ເກີດຈາກເຫດສຸດວິໄສ.

**ມາດຕາ 9. ການປ່ຽນແປງຂໍ້ມູນຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການສາມາດປ່ຽນແປງຂໍ້ມູນ ດັ່ງນີ້:

1. ທີ່ຢູ່ປະຈຸບັນ, ໂທລະສັບ, ອີເມວ, ອາຊີບ ແລະ ອື່ນໆ ມີການປ່ຽນແປງຈາກທີ່ໄດ້ລົງທະບຽນໄວ້ໂດຍຜູ້ໃຊ້ບໍລິການໃນເບື້ອງຕົ້ນເວລາລົງທະບຽນຄຳຮ້ອງຂໍນຳໃຊ້ ການບໍລິການຊື້-ຂາຍຮຸ້ນທາງອິນເຕີເນັດ, ຜູ້ໃຊ້ບໍລິການຈະຕ້ອງແຈ້ງໃຫ້ຜູ້ໃຫ້ບໍລິການຊາບກ່ຽວກັບການປ່ຽນແປງດັ່ງກ່າວໂດຍທັນທີ;
2. ລະຫັດຊື້-ຂາຍຮຸ້ນທາງອິນເຕີເນັດ, ລະຫັດຜ່ານ ແລະ ຂໍ້ມູນອື່ນໆ ທີ່ກ່ຽວກັບການເຄື່ອນໄຫວຊື້-ຂາຍຮຸ້ນທາງອິນເຕີເນັດ.

**ມາດຕາ 10. ການໂຈະ ແລະ ການຍົກເລີກສັນຍາການຊື້-ຂາຍຮຸ້ນທາງອິນເຕີເນັດ**

ການໂຈະ ແລະ ການຍົກເລີກສັນຍາການຊື້-ຂາຍຮຸ້ນທາງອິນເຕີເນັດຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 11. ການແກ້ໄຂຂໍ້ຂັດແຍ່ງ ແລະ ຄ່າທຳນຽມການຊື້-ຂາຍຮຸ້ນທາງອິນເຕີເນັດ**

ການແກ້ໄຂຂໍ້ຂັດແຍ່ງ ແລະ ຄ່າທຳນຽມການຊື້-ຂາຍຮຸ້ນທາງອິນເຕີເນັດ ໃຫ້ປະຕິບັດຕາມລະບຽບກົດໝາຍທີ່ກ່ຽວຂ້ອງ.

**ມາດຕາ 12. ຜົນສັກສິດນຳໃຊ້**

ສັນຍາການຊື້-ຂາຍຮຸ້ນທາງອິນເຕີເນັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ່ທັງສອງຝ່າຍໄດ້ລົງລາຍເຊັນຮ່ວມກັນເປັນຕົ້ນໄປ.

| ຜູ້ໃຊ້ບໍລິການ | ຜູ້ໃຫ້ບໍລິການ |
|---|---|
| ( ລູກຄ້າ ) | ( ບໍລິສັດຫຼັກຊັບ ແອລ໌ດີບີ ຈຳກັດຜູ້ດຽວ ) |
| (ຊື່ ແລະ ລາຍເຊັນ) | (ຊື່ ແລະ ລາຍເຊັນ) |